ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 13 ຫາ 17 ມີນາ 2023






ການກະສິກຳຫຼາກຫຼາຍເຮັດໃຫ້ປະຊາຊົນໃນເຂດຊົນນະບົດມີຊີວິດທີ່ດີຂຶ້ນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການກະສິກຳຫຼາກຫຼາຍເຮັດໃຫ້ປະຊາຊົນໃນເຂດຊົນນະບົດມີຊີວິດທີ່ດີຂຶ້ນ

ການຜະລິດປູກຝັງ ແລະ ລ້ຽງສັດ ໄດ້ເປັນພື້ນຖານໃນການສ້າງເສດຖະກິດຄອບຄົວຂອງປະຊາຊົນເຂດເມືອງຄຳ, ອີງໃສ່ທ່າແຮງພື້ນຖານດ້ານພື້ນທີ່ການຜະລິດ, ສະພາບແວດລ້ອມທີ່ເອື້ອອຳນວຍການຊຸກຍູ້ສົ່ງເສີມຂອງອຳນາດການປົກຄອງຂັ້ນເມືອງໂດຍສະເພາະຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ຮ່ວມກັບໂຄງການກະສິກຳເພື່ອໂພຊະນາສະໜັບໜູນດ້ານທຶນຮອນ, ການລົງໃກ້ຊິດຕິດແທດ ແລະ ຄວາມຮູ້ດ້ານເຕັກນິກວິຊາການ ບວກໃສ່ໜ່ແໜງຄວາມດຸໝັ່ນຂອງຊາວກະສິກອນທີ່ມີຢູ່ແລ້ວໄດ້ປາກົດມີຫຼາຍຄອບຄົວຊາວກະສິກອນທີ່ມີຜົນສຳເລັດໃນການປູກຝັງ ແລະ ລ້ຽງສັດສ້າງລາຍຮັບເຂົ້າສູ່ຄອບຄົວທັງປັບປຸງຄຸນນະພາບຊີວິດທີ່ດີຂຶ້ນ.

ດັ່ງຄອບຄົວຂອງ ທ່ານ ຄຳແພງ ວົງແພງຄຳ ປະຊາຊົນ ບ້ານ ສັນເມືອງ ຄຳ ແຂວງຊຽງຂວາງ ເປັນອີກໜຶ່ງຄອບຄົວທີ່ນອນໃນກຸ່ມລ້ຽງແບ້ ບ້ານ



ສັນ,ເມືອງ ຄຳ ແຂວງ ຊຽງຂວາງ ເຊິ່ງເພິ່ນໄດ້ເຮັດອາຊີບລ້ຽງສັດໂດຍການລ້ຽງແບ້ເປັນທຸລະກິດນ້ອຍໆແບບຄອບຄົວ ຮ່ວມກັບການງົວ, ປູກເຂົ້າ ແລະ ປູກສາລີ, ມາຮອດປັດຈຸບັນ ເຫັນວ່າມີທ່າຂະຫຍາຍຕົວໄດ້ແລກປ່ຽນປະສົບການບົດຮຽນ ແລະ ຜົນສຳເລັດໃຫ້ທີມງານວາລະສານ ກະສິກຳ ແລະ ປ່າໄມ້



ຂອງພວກເຮົາໃຫ້ຮູ້ວ່າ: ແຕ່ເດີມທີຄອບຄົວຂອງເພິ່ນແມ່ນປູກເຂົ້າມີເນື້ອທີ່ຢູ່ 5.000 ຕາແມັດ ຜົນຜະລິດໄດ້ຢູ່ 4,5-5 ໂຕນ ຂາຍໄດ້ປະມານໂຕນຫາໂຕນປາຍ ສ່ວນທີ່ເຫຼືອແມ່ນແຮໄດ້ກິນໃນຄອບຄົວ ແລະ ມີຜົນໄດ້ຮັບຈາກການປູກສາລີປະມານ 20 ປາຍໂຕນ ເຊິ່ງໄດ້ມີແມ່ຄ້າມາຮັບຊື້ຢູ່ສວນ ບາງເທື່ອກໍ່ໄປສົ່ງໃຫ້ໂຮງງານອົບສາລີທີ່ຮັບຊື້ເພື່ອເຮັດອາຫານສັດ, ພ້ອມທັງລ້ຽງງົວຕື່ມອີກຈຳນວນໜຶ່ງ ລາຍໄດ້ແຕ່ກ່ອນທີ່ຈະມາຮູ້ຈັກເຕັກນິການປູກການລ້ຽງ ແມ່ນພຽງແຕ່ພໍກຸ້ມກິນບໍ່ທັນມີເງິນເກັບເງິນທ້ອນ ຈົນມາຮອດປີເດືອນມິຖຸນາ 2019 ໄດ້ເລີ່ມມາລ້ຽງແບ້ເຊິ່ງໄດ້ຜົນຕອບຮັບທີ່ດີຫຼາຍ ມີເງິນກ້ອນສາມາດເອົາໄປຊື້ງົວມາຕື່ມ ຂະຫຍາຍເຮັດສວນປູກຫຍ້າ ແລະ ລ້ຽງເປັດໄກ່ຈຳນວນໜຶ່ງ ເຮັດໃຫ້ຄອບຄົວມີອາຫານການກິນທີ່ພຽງພໍ ມີລາຍຮັບເພີ່ມ.

ໃນການລ້ຽງແບ້ ລຸງຄຳແພງ ໄດ້ເລົ່າເຕັກນິກຂອງເພິ່ນໃຫ້ຟັງວ່າ ແບ້ແມ່ໜຶ່ງຈາກທີ່ໄດ້ລ້ຽງມາ ໃນປີໜຶ່ງຖ້າໂຊກດີແມ່ນບາງຄັ້ງແມ່ໜຶ່ງເກີດລູກແຝດ 3 ໂຕຫາ 4 ໂຕກໍ່ມີ ແຕ່ປົກກະຕິແລ້ວກໍ່ໄດ້ແມ່ ໜຶ່ງ 2 ໂຕ ລູກແບ້ທີ່ເກີດມາປະມານ 3 ເດືອນ ກໍ່ຂາຍໄດ້ ລາຄາຂາຍປະມານ 800.000-900.000 ກີບ, ສະເພາະລ້ຽງແບ້ຂາຍພາຍໃນເມືອງປີໜຶ່ງກໍ່ໄດ້ປະມານ 20 ກ່າວລ້ານ ບໍ່ໄດ້ລວມກັບລາຍຮັບຈາກການຂາຍງົວ ແລະ ການປູກພືດອື່ນ ຖືວ່າຕະຫຼາດມີຄວາມຕ້ອງການຫຼາຍ, ການລ້ຽງແມ່ນບໍ່ໄດ້ຫຍຸ້ງຍາກຂໍພຽງແຕ່ມີພື້ນທີ່ປູກຫຍ້າ, ໄວ້ປູກພືດຕະກຸນຖົ່ວທີ່ແບ້ມັກກິນໃນຍາມສຸກເສີນ ຫຼື ສັບປ່ຽນໃຫ້ກິນເພື່ເພີ່ມທາດອາຫານ, ການລ້ຽງຕົນໄດ້ໃຊ້ຮູບແບບປ່ອຍ ແລະ ຂັງ ໝູນວຽກໄປ ເພື່ອໃຫ້ແບ້ມີຄວາມແຂງແຮງ ສິ່ງສຳຄັນແມ່ນຕ້ອງມີການສັກຢາເພື່ອປ້ອງກັນພະຍາດຢ່າງເປັນປະຈຳ. ລຸງຄຳແພງ ຍັງກ່າວຕື່ມວ່າຜົນໄດ້ຮັບຈາກການປູກການລ້ຽງທີ່ຫຼາກຫຼາຍໄດ້ສົ່ງຜົນດີແກ່ຄອບຄົວ ມີຫຼາຍອັນປ່ຽນແປງ ລາຍໄດ້ສາມາດມາຈຸນເຈືອຄອບຄົວ ສົ່ງລູກເຕົ້າຮຽນ,ໄດ້ປຸກເຮືອນໃໝ່ໜຶ່ງຫຼັງ, ສະພາບເສດຖະກິດຂອງຄອບຄົວກໍ່ແມ່ນບໍ່ຫຍຸ້ງຍາກຄັດສົນຄືແຕ່ກ່ອນ.

ນາງ ແສງເພັດ ໄຊບຸນຕີ ບ້ານລ້ອງປົວ ເມືອງຄຳ ແຂວງ ຊຽງຂວາງ ເປັນອີກໜຶ່ງທ່ານທີ່ໄດ້ຮັບການຍັ້ງຢືນເປັນວິຊາການບ້ານ ປັດຈຸບັນໄດ້ນຳພາຄອບຄົວເຮັດອາຊີບກະສິກຳທີດ້ວຍການເຮັດການ



ຜະລິດແບບປະສົມປະສານໃນເນື້ອທີ່ເຄິ່ງເຮັກຕາ ປີໜຶ່ງໄດ້ສ້າງລາຍຮັບບໍ່ຕໍ່າກວ່າ 50 ລ້ານກີບ. ໂດຍໃຫ້ຮູ້ວ່າ: ໃນເນື້ອທີ່ ເຄິ່ງເຮັກຕາ ໄດ້ລ້ຽງສັດບຮ່ວມກັບການລ້ຽງປາ, ກົບ, ໝູ, ເປັດ, ໄກ່ ແບບປະສົມປະສານ, ໃນນີ້ເຮັດນາ 2,3 ເຮັກຕາ, ໜອງປາ 1,700 ຕາແມັດ ໃນແຕ່ກ່ອນມາເຮັດກະສິກຳປະສົມປະສານ ແມ່ນ ເຮັດແຕ່ນາ ຈາກນັ້ນໄດ້ມີໂຄງການກະສິກຳເພື່ອໂພຊະນາການມາຊ່ວຍຊຸກຍູ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກໍ່ໄດ້ລົງມາຕິດຕາມ ເຊິ່ງຕົນໂດຍໄດ້ຮັບການຝຶກອົບຮົມຕົວຈິງໃນການຜະລິດລູກປາ ແລະ ລູກກົບ ເຊິ່ງໄດ້ນຳເອົາບົດຮຽນມາທົດລອງຜະລິດເອງຈົນປະສົບຜົນສຳເລັດ ໂດຍນຳໃຊ້ເຕັກນິກການປະສົມພັນທຽມກົບ ພາຍຫຼັງທີ່ໄດ້ຊື້ກົບນ້ອຍທີ່ຈະມາໄວ້ເປັນພໍ່ແມ່ພັນແລ້ວແມ່ນໄດ້ລ້ຽງໃສ່ກະຊັງ ຈົນຮອດອາຍຸ 8 ເດືອນ,ຈາກນັ້ນສ້າງອ່າງອະນຸບານພ້ອມທັງຂ້າເຊື້ອໂດຍແຍກກົບໂຕຜູ້ໂຕແມ່ເພື່ອທອມໃຫ້ມັນສົມບູນ, ເມື່ອກົບມີຄວາມພ້ອມປະສົມພັນແມ່ນຈະນຳຂຶ້ນມາສັກຢາກະຕຸ້ນຮໍໂມນແລ້ວປ່ອຍລົງອ່າງຄືນປ່ອຍໃຫ້ມັນປະສົມພັນກັນແລ້ວອອກໄຂ່, ໄຂ່ກົບຈະແຕກເປັນໂຕພາຍໃນ 24 ຊົ່ວໂມງ, ໄລຍະ 0-3 ວັນແມ່ນຈະຍັງບໍ່ໃຫ້ອາຫານເທື່ອ, ມື້ທີ 4 ຈຶ່ງເບິ່ງໃຫ້ອາຫານຝຸ່ນ ຈົນຮອດ 15 ວັນຈຶ່ງໃຫ້ອາຫານປາດຸກເມັດນ້ອຍ, ເມື່ອລູກຮວກໄດ້ 20 ວັນ ແມ່ນໄດ້ແຍກອອກໄປໃສ່ກະຊັງຄັດໂຕທີ່ບໍ່ມີຫາງແລ້ວອອກ, ຈາກນັ້ນອະນຸບານຕໍ່ໄປໂດຍໃຫ້ອາຫານມື້ລະ 3 ຄັ້ງ ລ້ຽງໄປປະມານ 1 ເດືອນ ແມ່ນນຳອອກຂາຍໂດຍລາຄາຂາຍໃນລາຄາໂຕລະ 600 ກີບ,ປີໜຶ່ງຜະລິດ ແລະ ຂາຍໄດ້ 14-15 ລ້ານກີບ, ນອກນີ້ຄອບຄົວຍັງມີລາຍຮັບຈາກການລ້ຽງປານິນ 10 ລ້ານກີບ, ຈາກການຂາຍໝູ ແລະ ເປັດໄກ່ອີກຈຳນວນໜຶ່ງ ນອກນີ້ໃນຍາມລະດູແລ້ງຫຼັງກ່ຽວເຂົ້າ ກໍ່ໄດ້ປູກກະທຽມ, ຫອມບົ່ວ, ປູກກ້ວຍ ເຫັນໄດ້ວ່າຄອບຄົວແມ່ນມີລາຍຮັບທີ່ດີຫຼາຍ, ການລົງທຶນໃນກິດຈະກຳແມ່ນໃຊ້ຈາກເງິນຈາກຜົນຜະລິດເປັນທຶນໝູນວຽນຄອບຄົວກໍ່ມີອາຫານການກິນທີ່ພຽງພໍນຳອີກ.

**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ນ. ສຸດາຄຳ ພິມມະສອນ

**ບັນນາທິການ:**
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳພອນ ໄຊຍະລາດ

**ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:** ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;